*Souphanouvong University Journal of Multidisciplinary Research and Development*
*2026, Vol. 12, No. 01, 102-106*
*https://doi.org/10.69692/SUJMRD12102*

# Study the Development and Management of the Souphanouvong University Football Club

**Chittaphone Chitdeela [1], Kalaphath Kounlaxay [2], Khamsone Phommanith [3]**
*Organizational Resources Management Program, Accademic Management Office, Souphanouvong University, Lao PDR*

***1Correspondence:** Chittaphone Chitdeela, Faculty of Education, Souphanouvong University*
*Tel: +856 20 29301248,*
*E-mail: Chittaphone2024@gmail.com*

***Article Info:***
***Submitted: January 20, 2026***
***Revised: March 15, 2026***
***Accepted: March 25, 2026***

**Abstract**

This research aims to study the development conditions and management of the football club at Souphanouvong University. Data were collected from a sample group of 100 participants. The research instrument used was a questionnaire, and the data were analyzed using descriptive statistics to determine the mean ($\bar{X}$) and standard deviation (SD).The research results showed that the football club has a well-structured organizational system for its operations, which is at a high level ($\bar{X}$ = 4.00, SD = 1.36). The promotion of student participation in activities and the regular organization of competitions are also at a high level ($\bar{X}$ = 3.80, SD = 0.92). The club has strategies for participating in both internal and external competitions, achieving success and building its reputation, with satisfaction at a high level ($\bar{X}$ = 3.70, SD = 0.71).The club has its own training facilities, sufficient personnel, and collaboration with external institutions or communities to seek funding support. The administrators are experienced and professional, all of which are at a high level ($\bar{X}$ = 3.65, SD = 0.79). Strategic planning for future club development is also at a high level ($\bar{X}$ = 3.55, SD = 0.67).However, the application of sports science, medical care, and athlete health management is at a moderate level ($\bar{X}$ = 3.15, SD = 1.06). Training facilities are not yet up to standard and are insufficient to meet needs, and government budget support is still low ($\bar{X}$ = 3.20, SD = 1.36). Budget allocation for renovation, development of sports fields, and equipment is also at a moderate level ($\bar{X}$ = 3.15, SD = 0.89). Training equipment is insufficient and not up to standard, at a moderate level ($\bar{X}$ = 2.95, SD = 0.96). From the research findings, it is evident that the football club of Souphanouvong University needs to develop clear plans and establish development strategies to meet standards and reach an international level.

**Keywords**: Development status, management, development guidelines, football club

## 1. ພາກສະເໜີ

ກິລາບານເຕະ (Football) ຫຼື ຊອກເກີ (Soccer) ແມ່ນກິລາທີ່ມີຜູ້ຄົນນິຍົມຊົມຊອບສົນໃຈເຂົ້າຮ່ວມ ແລະ ຊົມການແຂ່ງຂັນ ຫຼາຍທີ່ສຸດໃນໂລກ, ເປັນກິລາທີ່ມີປະຫັວດຍາວນານ ແລະ ມີການແຂ່ງຂັນທຸກປະເທດທົ່ວໂລກ, ການເຕະບານໃນຮູບແບບດັ່ງເດີມມີມາຕັ້ງແຕ່ຫຼາຍພັນປີກ່ອນຢູ່ໃນອານາຈັກຈີນ (Zhang, 2020) ແລະ ອານາຈັກໂຣມໂດຍເປັນການຫຼິ້ນກັນແບບພື້ນເມືອງບໍ່ມີກົດກະຕິກາ ແລະ ຊາດໃດເປັນຜູ້ກຳເນີດກິລາຊະ ນິດນີ້ຢ່າງແທ້ຈິງບໍ່ສາມາດຢືນຢັນໄດ້ຢ່າງແນ່ນອນເນື່ອງຈາກແຕ່ລະຊາດກໍ່ຢືນຢັນວ່າເກີດຈາກປະເທດຂອງຕົນ, ແຕ່ໃນປະເທດຝຣັ່ງ ແລະ ປະເທດອີຕາລີໄດ້ມີການຫຼິ້ນກິລາຊະນິດໜຶ່ງທີ່ເອີ້ນວ່າ “ ຊູເລີ ” (Soule) ແມ່ນກິລາພື້ນເມືອງເກົ່າແກ່ຂອງຝຣັ່ງທີ່ມີມາຕັ້ງແຕ່ສະໄໝກາງ (Middle Ages). ມັນຖືກຍອມຮັບວ່າເປັນໜຶ່ງໃນ "ບັນພະບຸລຸດ" ຂອງກິລາບານເຕະ (Football) ແລະ ຣັກບີ້ (Rugby) ໃນປັດຈຸບັນ (Elias et al., 1986) ແຕ່ສຳລັບອິດຕາລີ່ ມີຊື່ວ່າ ຈີໂອໂກ ເດວຄາຊີໂອ (Gioco Del Calcio) ມີລັກສະນະການຫຼິ້ນທີ່ຄ້າຍຄືກັບກິລາບານເຕະໃນປະຈຸບັນ (Wood, 2017), ດັ່ງນັ້ນ, ທັງສອງປະເທດຈິ່ງອາດຖືກຖຽງກັນວ່າກິລາບານເຕະເກີດຂຶ້ນຈາກປະເທດຂອງຕົນ, ເປັນການຫາຂໍ້ຍຸດຕິບໍ່ໄດ້ເພາະຂາດຫຼັກຖານຢືນຢັນຢ່າງແທ້ຈິງ.

ດັ່ງນັ້ນ, ປະຫັວດຂອງກິລາບານເຕະ ທີ່ມີຫຼັກຖານຊັດເຈນ ແລະ ສາມາດອ້າງອີງໄດ້ຄືປະເທດອັງກິດ ເນື່ອງຈາກປະເທດອັງກິດໄດ້ສ້າງຕັ້ງ ສະມາຄົມເຕະບານ ໃນປີ ຄສ 2406 ແລະ ເຕະບານອາຊີບຂອງອັງກິດເກີດຂຶ້ນໃນປີ ຄສ 2431. ຫຼັກຖານທີ່ເກັບກຳມາ, ສ່ວນໃຫຍ່ແມ່ນສະໂມສອນບານເຕະຍຸກວິກຕໍເຣຍ (Kennedy, 2004).

ການເຕະບານສະໄໝໃໝ່ ໄດ້ເກີດຂຶ້ນໃນປະເທດອັງກິດປະມານຄັ້ງສັດຕະວັດທີ 19 ໃນເວລານັ້ນໂຮງຮຽນ ແລະ ມະຫາວິທະຍາໄລ ໃນອັງກິດໄດ້ນຳເອົາການເຕະບານມາຫຼິ້ນແຕ່ລະທີມມີກົດກະຕິກາຂອງຕົນເອງຈົນກະທັ້ງໃນປີ ຄສ. 1863 ສະມາຄົມເຕະບານອັງກິດ (The Football Association-FA) ໄດ້ຖືກກໍ່ຕັ້ງຂຶ້ນ ແລະ ວາງກົດກະຕິກາສາກົນຂຶ້ນຊຶ່ງເປັນຮາກຖານຂອງກິລາບານເຕະສະໄໝໃໝ່ (The Football Association , 2023).

ການກິລາ ແມ່ນມີຄວາມສຳຄັນຕໍ່ການພັດທະນາຄຸນນະພາບຊີວິດຂອງປະຊາຊົນ ທັງດ້ານສຸຂະພາບ ແລະ ພະ ລະນາໄມ ແລະ ດ້ານຈິດໃຈ ເປັນປັດໃຈສຳຄັນທີ່ເຮັດໃຫ້ປະຊາຊົນສາມາດພັດທະນາຊີວິດ

ຂອງຕົນເອງ ຄອບຄົວ ຊຸມຊົນ ແລະ ສັງຄົມ ໄປສູ່ການມີສ່ວນຮ່ວມໃນການພັດທະນາເສດຖະກິດ ສັງຄົມ ການເມືອງໄດ້ຢ່າງມີປະສິດທິພາບ ການແຂ່ງຂັນກິລາແມ່ນຈະມີຜົນ 2 ດ້ານຄື: ຊະນະ (Win) ຫຼື ເສຍ (Lose) ທີ່ເປັນກົດເກນຂອງການແຂ່ງຂັນ (Dolles, 2015). ກິລາຖືກນຳໄປໃຊ້ເປັນເຄື່ອງມືໃນການສ້າງຄວາມເຂັ້ມແຂງໃຫ້ກັບຄອບຄົວ ແລະ ຊຸມຊົນ.ໃນປະເທດທີ່ມີຄວາມພັດທະນາແລ້ວໃນທົ່ວໂລກ ມັກຈະໃຊ້ຂະບວນການຂອງກິລາໃນການສ້າງການມີສ່ວນຮ່ວມ ສ້າງເຄືອຂ່າຍຊຸມຊົນ ແລະ ປູກຝັງຈິດສຳ ນຶກໃນການດຳລົງຊີວິດໃຫ້ມີຄຸນນະທຳມີວິໄນ ແລະ ຄວາມຮັບຜິດຊອບຕໍ່ໜ້າທີ່ ຮັບຮູ້ໃນສິດຂອງຕົນເອງ ແລະຂອງຜູ້ອື່ນ ຊຶ່ງເປັນພື້ນຖານທີ່ດີຂອງສັງຄົມ.

ດັ່ງນັ້ນ ຈຶ່ງໄດ້ມີການສົ່ງເສີມໃຫ້ໃຊ້ກິລາ ການອອກກຳລັງກາຍ ແລະ ພັດທະນາການ ເປັນເຄື່ອງມືໃນການສົ່ງເສີມຄຸນນະພາບຊີວິດຂອງປະຊາກອນໃນປະເທດຂອງຕົນ (Yimthong, 2013). ໃນປັດຈຸບັນກິລາບານເຕະໄດ້ຮັບຄວາມນິຍົມຢ່າງສູງມີຜູ້ເຂົ້າຊົມການແຂ່ງຂັນເປັນຈຳນວນຫຼາຍ ແລະ ມີການແຂ່ງຂັນໃນລະດັບຕ່າງໆ ທັງໃນລະດັບສາກົນ ແລະ ລະດັບສະໂມສອນທຳໃຫ້ມີການກໍ່ຕັ້ງສະໂມສອນບານເຕະທົ່ວທຸກແຂວງໃນປະເທດ.

ປະກົດການນີ້ເກີດຂຶ້ນຢ່າງໄວວາ ເຮັດໃຫ້ມີກອງເຊຍ ແລະແຟນຄລັບຄອຍເຊຍທີມທີ່ຕົນເອງຮັກ ແລະ ປະທັບໃຈຢູ່ຕະຫຼອດ. ຍິ່ງໄປກວ່ານັ້ນບານເຕະຍັງເປັນກິລາອາຊີບຊະນິດໜຶ່ງທີ່ສາມາດສ້າງລາຍຮັບໄດ້ຢ່າງຫຼວງຫຼາຍ ຄ່າແຮງງານຂອງນັກບານໃນປັດຈຸບັນ ຖືວ່າມີມູນຄ່າສູງຫຼາຍ ເມື່ອທຽບກັບອາຊີບອື່ນໆ ຂະໜາດປະກອບອາຊີບໃນລີກຂອງຢູໂຣບ ເຊັ່ນ ລີກອັງກິດ ລີກສະເປນ ແລະ ອື່ນໆ ໄດ້ກຳນົດຄ່າແຮງງານຂອງນັກເຕະບານຕໍ່ອາທິດ ເຊິ່ງຫຼາຍກວ່າເງິນເດືອນຂອງຜູ້ປະກອບອາຊີບທົ່ວໄປຫຼາຍເທົ່າ.

ດັ່ງນັ້ນ, ເຮັດໃຫ້ເຍົາວະຊົນໃນປະຈຸບັນ ຫັນມາໃຫ້ຄວາມສົນໃຈໃນການຫຼິ້ນກິລາບານເຕະ ເພື່ອເປັນອາຊີບຫຼາຍຂຶ້ນ. ນັກເຕະບານເອງກໍ່ມີຄວາມພະຍາຍາມພັດທະນາຕົນເອງ ໃຫ້ກ້າວຂຶ້ນສູ່ການເປັນນັກເຕະບານອາຊີບ ຫຼາຍຂຶ້ນ (Poli et al., 2015), ເນື່ອງຈາກວ່າອາຊີບນັກເຕະບານ ແມ່ນອາຊີບທີ່ມີລາຍຮັບສູງ, ຄ່າແຮງງານກໍ່ຄຸ້ມຄ່າ, ແລະ ຍັງໄດ້ຮັບຊື່ສຽງໃນສັງຄົມອີກເປັນຈຳນວນຫຼວງຫຼາຍ.

ກິລາບານເຕະກໍ່ແມ່ນກິລາຍອດນິຍົມປະເພດໜຶ່ງໃນປະເທດລາວ ເຊິ່ງໄດ້ຈັດຕັ້ງ ແລະ ເຄື່ອນໄຫວພາຍໃຕ້ການບໍລະຫານຈັດການຂອງ ສະຫະພັນບານເຕະແຫ່ງຊາດລາວ ຫຼື "ສຕລ" (Lao Football Federation ຫຼື LFF) ເຊິ່ງແມ່ນອົງກອນທີ່ຄຸ້ມຄອງ ແລະ ບໍລິຫານວຽກງານບານເຕະທັງໝົດໃນ ສປປ ລາວທີ່ເລີ່ມກໍ່ຕັ້ງນັບແຕ່ປີ ຄສ. 1951 ເປັນຕົ້ນມາ (ສະຫະພັນບານເຕະແຫ່ງຊາດລາວ, 2024) ເຊິ່ງ LFF ມີໜ້າທີ່ສຳຄັນໃນການພັດທະນາວົງການບານເຕະລາວ ເຊັ່ນ: ທີມຊາດ ທີ່ຄຸ້ມຄອງ ແລະ ຄັດເລືອກນັກກິລາເຂົ້າທີມຊາດລາວ ທັງຍິງ ແລະຊາຍ ໃນທຸກລຸ້ນອາຍຸ (U16, U19, U23 ແລະ ທີມຊຸດໃຫຍ່). ການຈັດການແຂ່ງຂັນ: ເປັນຜູ້ຈັດການແຂ່ງຂັນ Lao League 1 ແລະ Lao League 2, ລວມທັງບານເຕະຊິງຂັນ (Lao FF Cup); ການພັດທະນາທີ່ສ້າງຫຼັກສູດການຝຶກສອນຄູຝຶກ (Coaching) ແລະ ກຳມະການ (Referee) ໃຫ້ໄດ້ມາດຕະຖານສາກົນ ແລະ ບານເຕະຮາກຖານ ທີ່ສົ່ງເສີມບານເຕະເຍົາວະຊົນ (Grassroots) ເພື່ອປູພື້ນຖານໃຫ້ນັກກິລາຮຸ່ນໃໝ່.

ມະຫາວິທະຍາໄລ ສຸພານຸວົງ ກໍ່ແມ່ນສະຖາບັນການສຶກສາທີ່ມີການຈັດຕັ້ງ ແລະ ເຄື່ອນໄຫວກິດຈະກຳໂດຍສະເພາະແມ່ນການສ້າງຕັ້ງສະໂມສອນກິລາບານເຕະ ຈຸດປະສົງເພື່ອສົ່ງເສີມການອອກກຳລັງກາຍ ແລະ ການຫຼິ້ນກິລາຂອງນັກສຶກສາ, ພະນັກງານ ແລະ ຄູ-ອາຈານ ພາຍໃນມະຫາວິທະຍາໄລ ສະໂມສອນກິລາບານເຕະນີ້ໄດ້ມີບົດບາດສຳຄັນໃນການພັດທະນາທາງດ້ານຮ່າງກາຍ, ດ້ານອາລົມ, ດ້ານ ສັງຄົມ ແລະທາງດ້ານຈິດໃຈຂອງບຸກຄົນທີ່ຊ່ວຍໃຫ້ນັກສຶກສາມີສຸຂະພາບທີ່ແຂງແຮງ, ມີຄວາມສາມັກຄີຮັກ ແພງປອງດອງ ໂອບເອື້ອອາລີຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ມີຄວາມສົມດູນທາງດ້ານສຸຂະພາບຮ່າງກາຍໃນຊີວິດ ການສຶກສາຮ່ຳຮຽນ ແລະ ການເຄື່ອນໄຫວກິດຈະກຳຕາມ 5 ຫຼັກມູນຂອງການສຶກສາ.

ດັ່ງນັ້ນ ຈຶ່ງໄດ້ສຶກສາກ່ຽວກັບສະພາບການພັດທະນາ ແລະການບໍລິຫານ ສະໂມສອນກິລາບານເຕະ ຂອງ ມະຫາວິທະຍາໄລ ສຸພານຸວົງ; ເພື່ອນຳຜົນຂອງການຄົ້ນຄ້ວາ ໄປເປັນຂໍ້ມູນພື້ນຖານຂອງສະໂມສອນກິລາ ແລະ ສາມາດນຳໄປປັບໃຊ້ເຂົ້າໃນການກຳນົດແນວທາງ ສຳລັບການປັບປຸງ ແນວທາງໃນການພັດທະນາ ແລະບໍລິຫານ ສະໂມສອນກິລາບານເຕະຂອງ ມະຫາວິທະຍາໄລ ສຸພານຸວົງ.

## 2. ວິທີການຄົ້ນຄວ້າ

### 2.1. ເຄື່ອງມືໃນການເກັບກຳຂໍ້ມູນ

ການຄົ້ນຄວ້າຄັ້ງນີ້ ແມ່ນການຄົ້ນຄວ້າແບບປະລິມານ (Quantitative Research) ໂດຍນຳໃຊ້ແບບສອບຖາມ (Questionaire) ທີ່ເປັນແບບເລືອກຕອບຕາມລາຍການ (Check List) ແລະ ມີຄຳຖາມເປັນແບບມາດຕາສ່ວນ 5 ລະດັບ ຕາມແບບຂອງ Likerts Scales ເຊິ່ງການສ້າງແບບສອບຖາມແມ່ນນຳໃຊ້ທິດສະດີກ່ຽວຂ້ອງກັບ ສະພາບການພັດທະນາ ແລະ ການບໍລິຫານ ສະໂມສອນກິລາບານເຕະ ມະຫາວິທະຍາໄລ ສຸພານຸວົງ ເຊິ່ງແບ່ງອອກເປັນ 2 ພາກສ່ວນຄື:

**ພາກສ່ວນທີ 1**: ແມ່ນຂໍ້ມູນສ່ວນຕົວຂອງຜູ້ຕອບແບບສອບຖາມ.

**ພາກສ່ວນທີ 2**: ຄວາມຄິດເຫັນຕໍ່ກັບສະພາບການພັດທະນາ ແລະການບໍລິຫານ ສະໂມສອນກິລາບານເຕະ ມະຫາວິທະຍາໄລ ສຸພານຸວົງ.

### 2.2. ປະຊາກອນ ແລະ ກຸ່ມຕົວຢ່າງ

ປະຊາກອນທີ່ໃຊ້ໃນການວິໄຈໃນຄັ້ງນີ້ ແມ່ນນັກກິລາ, ຄູຝຶກ, ປະທານສະໂມ ສອນທີ່ຢູ່ພາຍໃນ ມະຫາວິທະຍາໄລ ສຸພານຸວົງ ແລະສະໂມສອນກິລາບານເຕະຫຼວງພະບາງ, ຈຳນວນ 100 ຄົນ

ສຳລັບການກຳນົດຂະໜາດກຸ່ມຕົວຢ່າງ (Sample Size)ທີ່ໃຊ້ໃນຕາຕະລາງນີ້, ແມ່ນໃຊ້ສູດຄິດໄລ່ຂອງ Yamane 1973) ໃນກໍລະນີທີ່ຮູ້ຂະໜາດປະຊາກອນທີ່ແນ່ນອນ, ເຊິ່ງໄດ້ກຸ່ມຕົວຢ່າງເທົ່າກັບ 80 ຄົນ.

### 2.3. ການຄັດເລືອກກຸ່ມຕົວຢ່າງ

ສຳລັບການກຳນົດຂະໜາດກຸ່ມຕົວຢ່າງ (Sample Size) ທີ່ໃຊ້ໃນຕາຕະລາງນີ້, ເຊິ່ງມີຈຳນວນປະຊາກອນທັງໝົດ ຫຼື ກຸ່ມຕົວຢ່າງທີ່ໄດ້ມາແມ່ນ $N = 100$ ສູດທີ່ນິຍົມໃຊ້ທີ່ສຸດໃນງານວິໄຈທາງສັງຄົມສາດແມ່ນ ສູດຂອງ Taro Yamane (Taro Yamane, 1973) ເຊິ່ງນີ້ຄືລາຍລະອຽດຂອງສູດ ແລະ ວິທີການຄິດໄລ່: ສູດນີ້ໃຊ້ເພື່ອຄຳນວນຫາຂະໜາດຂອງກຸ່ມຕົວຢ່າງທີ່ເໝາະສົມ ໂດຍຍອມຮັບຄ່າຄວາມຄາດເຄື່ອນໃນລະດັບໃດໜຶ່ງ (ປົກກະຕິແມ່ນ 5% ຫຼື 0.05):

$$n = \frac{N}{1 + Ne^2}$$

- $n$: ຂະໜາດຂອງກຸ່ມຕົວຢ່າງທີ່ຕ້ອງການ (Sample Size)
- $N$: ຈຳນວນປະຊາກອນທັງໝົດ (Population Size)

- $e$: ຄ່າຄວາມຄາດເຄື່ອນທີ່ຍອມຮັບໄດ້ (Significance level ຫຼື Error), ຕົວຢ່າງ: 0.05 (ສໍາລັບລະດັບຄວາມເຊື່ອໝັ້ນ 95%)

❖ **ຂັ້ນຕອນການແທນຄ່າ:** $N = 100; e = 0.05$

$n = \frac{100}{1+100(0.05)^2}$=80

ຜົນຮັບຈະໄດ້ກຸ່ມຕົວຢ່າງ 80 ຄົນ.

**2.4. ການວິເຄາະຂໍ້ມູນ**

ການຄົ້ນຄວ້າຄັ້ງນີ້ ແມ່ນໄດ້ວິເຄາະຂໍ້ມູນທາງສະຖິຕິ ດ້ວຍໂປຼແກຼມສໍາເລັດຮູບທາງສະຖິຕິ (SPSS) ໂດຍໄດ້ນໍາຂໍ້ມູນຈາກແບບສອບຖາມທີ່ລົງເກັບກໍາໄດ້ນັ້ນມາລົງລະຫັດເປັນຕົວເລກ (Code) ຕາມທີ່ໄດ້ກໍານົດໄວ້ສໍາລັບຂໍ້ຄໍາຖາມ, ແລ້ວບັນທຶກລົງໃນໂປຼແກຼມ ເພື່ອດໍາເນີນການວິເຄາະຂໍ້ມູນທາງສະຖິຕິ ເຊັ່ນ: ຄ່າຄວາມຖີ່ (Frequency), ຄ່າສ່ວນຮ້ອຍ (Percentage), ຄ່າສະເລ່ຍ (Mean) ແລະ ຄ່າຜັນປ່ຽນມາດຕະຖານ (Standard Division).

ມີເກນໃນການ ແປຄວາມໝາຍຕາມມາດຕາສ່ວນປະເມີນຄ່າຂອງ Sisa-art, 2002) ດັ່ງນີ້:.

❖ **ເກນການແປຄວາມໝາຍ ຂອງຄ່າສະເລ່ຍ**

ໃຊ້ເກນແປຄວາມໝາຍຕາມແນວຄວາມຄິດຂອງ (ບຸນຊົມ ສີສະອາດ, 2546)ສໍາລັບອະທິບາຍລະດັບຄວາມຄິດເຫັນຕໍ່ການປະເມີນການພັດທະນາ ແລະ ການບໍລິຫານສະໂມສອນ ກິລາບານເຕະ ມະຫາວິທະຍາໄລ ສຸພານຸວົງ, ມີດັ່ງນີ້:

ຄະແນນສະເລ່ຍ 4.50 - 5.00 ໝາຍເຖິງ ສະພາບການພັດທະນາ ແລະ ບໍລິຫານ ຫຼາຍທີ່ສຸດ

ຄະແນນສະເລ່ຍ 3.50 - 4.49 ໝາຍເຖິງ ສະພາບການພັດທະນາ ແລະ ບໍລິຫານ ຫຼາຍ

ຄະແນນສະເລ່ຍ 2.50 - 3.49 ໝາຍເຖິງ ສະພາບການພັດທະນາ ແລະ ບໍລິຫານ ປານກາງ

ຄະແນນສະເລ່ຍ 1.50 - 2.49 ໝາຍເຖິງ ສະພາບການພັດທະນາ ແລະ ບໍລິຫານ ໜ້ອຍ

ຄະແນນສະເລ່ຍ 1.00 - 1.49 ໝາຍເຖິງ ສະພາບການພັດທະນາ ແລະ ບໍລິຫານ ໜ້ອຍທີ່ສຸດ

**3. ຜົນໄດ້ຮັບ**

**3.1 ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ**

ຜູ້ຕອບແບບສອບຖາມເປັນເພດຊາຍ ກວມຫຼາຍກວ່າໝູ່ຄື: 60 ຄົນ ເທົ່າ 75%, ເພດຍິງ 20 ຄົນ ເທົ່າ 25%,ມີຊ່ວງອາຍຸ 35-45 ປີ, ກວມຈໍານວນຫຼາຍກວ່າໝູ່ຄື: 37 ຄົນ ເທົ່າ 46.25%, ຖັດລົງມາແມ່ນຊ່ວງ 18-21 ປີ ມີຈໍານວນ 16 ຄົນ ເທົ່າ 20%, ຮອງລົງມາແມ່ນຊ່ວງ 22-35 ປີ, ມີຈໍານວນ 16 ຄົນ ເທົ່າ 20%, ແລະ ຕໍ່າກວ່າໝູ່ແມ່ນຊ່ວງອາຍຸ 46 ປີຂຶ້ນໄປ ມີຈໍານວນ 11 ຄົນ ເທົ່າ 13.75%, ມີລະດັບການສຶກສາຕໍ່າກວ່າປະລິນຍາຕີ ມີຈໍານວນ 4 ຄົນ ກວມເອົາ 5% ຮອງລົງມາແມ່ນມີລະດັບປະລິນຍາຕີ ມີຈໍານວນ 38 ຄົນ ກວມເອົາ 47.50%, ແລະ ປະລິນຍາໂທ ແມ່ນມີ 38 ຄົນ ກວມເອົາ 47.50 %, ແລະ ມີປະສົບການເຮັດວຽກຢູ່ລະຫວ່າງ 10-20 ປີ ແມ່ນມີຫຼາຍກວ່າໝູ່ມີຈໍານວນ 63 ຄົນ ກວມເອົາ 78.75%, ຮອງລົງມາແມ່ນຢູ່ໃນລະຫວ່າງ 21 ປີຂຶ້ນໄປມີຈໍານວນ 17 ຄົນ ກວມເອົາ 21.25%, ສະຖານະພາບການດໍາລົງຕໍາແໜ່ງເຫັນວ່າປະເພດ4 ມີຫຼາຍກວ່າໝູ່ມີຈໍານວນ 27 ຄົນ ກວມເອົາ 33.75%, ຮອງລົງມາແມ່ນນັກກິລາເຊິ່ງມີຈໍານວນ 23 ຄົນ ກວມເອົາ 28.75 %, ຖັດລົງມາແມ່ນຕໍາແໜ່ງປະເພດ5 ມີຈໍານວນ 16 ຄົນ ກວມເອົາ 20%,ຖັດມາແມ່ນປະເພດ5 ມີຈໍານວນ 6 ຄົນ ກວມເອົາ 7.5%, ແລະ ຕໍ່າກວ່າໝູ່ແມ່ນຄູຝຶກ ມີຈໍານວນ 5 ຄົນ ກວມເອົາ 2.5%

**3.2 ສະພາບການພັດທະນາ ແລະ ການບໍລິຫານ ສະໂມສອນກິລາບານເຕະ ມະຫາວິທະຍາໄລ ສຸພານຸວົງ**

ເພື່ອສຶກສາສະພາບການພັດທະນາ ແລະ ການບໍລິຫານສະໂມສອນກິລາບານເຕະ ມະຫາວິທະຍາໄລ ສຸພານຸວົງ ເຊິ່ງຜົນຂອງການຄົ້ນຄວ້າວິໄຈ ສະແດງໃຫ້ເຫັນວ່າ ສະໂມສອນບານເຕະມີໂຄງຮ່າງການຈັດຕັ້ງຢ່າງຄົບຖ້ວນໃນການເຄື່ອນໄຫວ ຢູ່ໃນລະດັບດີ ($\bar{X}$ = 4.00; S.D = 1.36); ມີການສົ່ງເສີມໃຫ້ນັກສຶກສາເຂົ້າຮ່ວມກິດຈະກໍາ ແລະ ມີການຈັດການແຂ່ງຂັນເປັນປະຈໍາ ແມ່ນຢູ່ໃນລະດັບດີ ($\bar{X}$ = 3.80; S.D = 0.92); ມີຍຸດທະສາດໃນການເຂົ້າຮ່ວມແຂ່ງຂັນພາຍໃນ ແລະ ພາຍນອກ, ມີຜົນສໍາເລັດ ແລະ ສ້າງຊື່ສຽງຂອງສະໂມສອນໃນການແຂ່ງຂັນໂດຍມີຄວາມພໍໃຈຕໍ່ຜົນງານ ຢູ່ໃນລະດັບດີ ($\bar{X}$ = 3.70; S.D = 0.71); ສະໂມສອນມີສະຖານທີ່ຝຶກຊ້ອມເປັນຂອງຕົນເອງ, ມີບຸກຄະລາກອນພຽງພໍ, ການສ້າງຄວາມຮ່ວມມືກັບສະຖາບັນ ຫຼື ຊຸມຊົນພາຍນອກ ເພື່ອຊອກຫາແຫຼ່ງທຶນໃນການສະໜັບສະໜູນ, ຜູ້ບໍລິຫານມີຄວາມຊໍານິຊໍານານ ແລະ ເປັນມືອາຊີບຢູ່ໃນລະດັບດີຫຼາຍ ($\bar{X}$ = 3.65; S.D = 0.79); ຮອງລົງມາແມ່ນການວາງແຜນຍຸດທະສາດພັດທະນາສະໂມສອນໃນອະນາຄົດໃນລະດັບດີ ($\bar{X}$ = 3.55; S.D = 0.67); ການນໍາເອົາວິທະຍາສາດການກິລາ ການແພດ ແລະ ການດູແລສຸຂະພາບນັກກິລາ ແມ່ນຢູ່ໃນລະດັບປານກາງ ($\bar{X}$ = 3.15; S.D = 1.06); ສະຖານທີ່ຝຶກຊ້ອມຍັງບໍ່ທັນໄດ້ມາດຕະຖານ ແລະ ພຽງພໍຕໍ່ຄວາມຕ້ອງການ, ການສະໜັບສະໜູນດ້ານງົບປະມານ ຫຼື ທຶນຈາກລັດຖະບານແມ່ນຍັງຕໍ່າ ($\bar{X}$ = 3.20; S.D = 1.36); ສ່ວນດ້ານທີ່ມີຄ່າສະເລ່ຍຕໍ່າແມ່ນດ້ານການຕອບສະໜອງດ້ານງົບປະມານໃນການປັບປຸງສ້ອມແປງ, ພັດທະນາສະໜາມກິລາ ແລະ ອຸປະກອນ ແມ່ນໃນລະດັບປານກາງ ($\bar{X}$ = 3.15; S.D = 0.89); ອຸປະກອນຝຶກຊ້ອມຍັງບໍ່ພຽງພໍກັບຄວາມຕ້ອງການ ແລະ ຍັງບໍ່ໄດ້ມາດຕະຖານ ແມ່ນໃນລະດັບປານກາງ ($\bar{X}$ = 2.95; S.D = 0.96). ຈາກຜົນການຄົ້ນຄວ້າວິໄຈສະແດງໃຫ້ເຫັນວ່າ ສະໂມສອນກິລາບານເຕະຂອງ ມະຫາວິທະຍາໄລ ສຸພານຸວົງ ຕ້ອງໄດ້ສ້າງແຜນ ແລະ ກໍານົດແນວທາງການພັດທະນາໃນຫຼາຍດ້ານເພື່ອໃຫ້ໄດ້ມາດຕະຖານ ແລະ ໃນລະດັບສາກົນ (ຕາຕະລາງ 2).

**4. ວິພາກຜົນ**

ຈາກການສຶກສາ ແລະ ວິເຄາະຂໍ້ມູນກ່ຽວກັບສະພາບການພັດທະນາ ແລະ ການບໍລິຫານ ຂອງກຸ່ມຕົວຢ່າງຈໍານວນ 100 ທ່ານ, ສາມາດຈໍາແນກຜົນການວິເຄາະອອກເປັນແຕ່ລະປະເດັນ ຈາກຕາຕະລາງທີ່ລະບຸເລກຕາຕະລາງ, ພົບວ່າທັດສະນະຄົນຂອງຜູ້ຕອບແບບສອບຖາມຕໍ່ກັບສະພາບການພັດທະນາ ແລະ ການບໍລິຫານ ໂດຍລວມແມ່ນຢູ່ໃນລະດັບ ປານກາງ, ຖ້າພິຈາລະນາເປັນລາຍຂໍ້ ໂດຍລຽງລໍາດັບຈາກຄ່າສະເລ່ຍສູງຫາຕໍ່າ ສາມາດແບ່ງອອກໄດ້ເປັນ 2 ກຸ່ມ ຄື:

ຈາກຜົນການວິເຄາະຂ້າງເທິງ ສາມາດສະຫຼຸບໄດ້ວ່າ ອົງກອນມີຈຸດເດັ່ນໃນດ້ານ ໂຄງສ້າງການບໍລິຫານ ແລະ ຍຸດທະສາດການແຂ່ງຂັນ ເຊິ່ງສະທ້ອນໃຫ້ເຫັນເຖິງການຈັດຕັ້ງທີ່ມີລະບົບ ແລະ ບຸກຄະລາກອນທີ່ມີຄວາມຮູ້ຄວາມສາມາດ ເຊິ່ງສອດຄ່ອງກັບການຄົ້ນຄວ້າວິໄຈຂອງ ວ້າງ ຈື້ຈິງ (Zijing & Yinru ., 2022) ທີ່ໄດ້ສຶກສາການບໍລິຫານຈັດການສະໂມສອນບານເຕະ ກໍລະນີສຶກສາຂອງສະຫະພັນບານເຕະອັງກິດ. ແຕ່ເຖິງຢ່າງໃດກໍຕາມ, ຍັງມີຂໍ້ຄົງຄ້າງທີ່ຄວນໄດ້ຮັບການປັບປຸງຢ່າງຮີບດ່ວນ ຄືດ້ານ ອຸປະກອນຝຶກຊ້ອມ ແລະ ງົບປະມານການບໍາລຸງ

ຮັກສາ ທີ່ຄ່າສະເລ່ຍທີ່ຕໍ່າໃນດ້ານມາດຕະຖານອຸປະກອນ $\bar{X}$ = 2.95 ຊີ້ໃຫ້ເຫັນວ່າ ຄວາມພຽງພໍຂອງອຸປະກອນຍັງບໍ່ທັນຕອບສະໜອງໄດ້ຕາມຄວາມຕ້ອງການ ເຊິ່ງອາດສົ່ງຜົນກະທົບຕໍ່ປະສິດທິພາບໃນການພັດທະນາໃນໄລຍະຍາວ ເຊິ່ງສອດຄ່ອງກັບການຄົ້ນຄວ້າວິໄຈຂອງ ປາວີນີ ຈຸມໃຈ (Chumjai, 2022) ທີ່ສຶສາຄົ້ນຄວ້າກ່ຽວກັບ ຂະບວນການຄຸ້ມຄອງການວາງແຜນສູນກິລາ ມະຫາວິທະຍາໄລ ໃນປະເທດໄທ. ນອກຈາກນີ້, ຄວນມີການວາງແຜນດ້ານການບໍລິຫານຈັດສັນດ້ານງົບປະມານນໍາໃຊ້ໃຫ້ມີຄວາມສົມດຸນລະຫວ່າງການຈັດການແຂ່ງຂັນ ແລະ ການບໍາລຸງຮັກສາສະຖານທີ່ທໍາການເຝິກຊ້ອມ ແລະ ການແຂ່ງຂັນ ແມ່ນສິ່ງທ້າທາຍທີ່ຕ້ອງໃຊ້ທັງສາດ ແລະ ສິນ. ຖ້າເນັ້ນແຕ່ການແຂ່ງຂັນແລ້ວປ່ອຍໃຫ້ສະໜາມໂຊມ, ຄຸນນະພາບເກມກໍຈະຕົກຕໍ່າ ແລະ ສ່ຽງຕໍ່ການບາດເຈັບຂອງນັກກິລາ ເຊິ່ງສອດຄ່ອງກັບການຄົ້ນຄວ້າວິໄຈຂອງ ສູມາ ເສີດາ (Samur, 2018) ທີ່ສຶສາຄົ້ນຄວ້າກ່ຽວກັບ ການອອກແບບອີງກອນໃນຂະບວນການຄຸ້ມຄອງກິລາບານເຕະ. ການພັດທະນາສະໂມສອນບານເຕະ ໃຫ້ກ້າວໄປສູ່ລະດັບມືອາຊີບ ແລະ ມີຄວາມຍືນຍົງນັ້ນ ແມ່ນສິ່ງທ້າທາຍແຕ່ກໍເຕັມໄປດ້ວຍໂອກາດ ແລະ ປັດໄຈສໍາຄັນທີ່ສຸດແມ່ນ **"ຄວາມຕໍ່ເນື່ອງ"** ເຊິ່ງກິລາບານເຕະບໍ່ສາມາດພັດທະນາໄດ້ໃນຂ້າມຄືນ, ແຕ່ຕ້ອງອາໄສຄວາມອົດທົນ ແລະ ການວາງແຜນໄລຍະຍາວ 5-10 ປີ. ແຕ່ສິ່ງທີ່ທ້າທາຍສໍາລັບການພັດທະນາສະໂມສອນບານເຕະຂອງມະຫາວິທະຍາໄລ ສ່ວນໃຫຍ່ແລ້ວນັກກິລາຈະແມ່ນນັກສຶກສາທີ່ກໍາລັງຮຽນຢູ່ໃນມະຫາວິທະຍາໄລ ເມື່ອພວກເຂົາເລົ່ານັ້ນ ຮຽນຈົບໄປແລ້ວກໍ່ໄປປະກອບອາຊີບຕາມສາຂາທີ່ຕົນເອງໄດ້ສຶກສາຮໍ່າຮຽນມາ ບາງຄົນອາດຈະມີໂອກາດໄດ້ສືບຕໍ່ເປັນນັກກິລາບານເຕະໃນແຕ່ລະສະໂມສອນທັງພາຍໃນ ແລະ ຕ່າງປະເທດ ຫຼື ມີບາງຄົນກໍ່ອາດຈະບໍ່ໄດ້ສືບຕໍ່ເປັນນັກກິລາທັງນີ້ກໍ່ຂຶ້ນຢູ່ກັບສະພາບການຂອງເຂົາເຈົ້າເອງ ເພາະໂດຍລວມແລ້ວລີກການແຂ່ງຂັນບານເຕະໃນປະເທດລາວເຮົາກໍ່ຍັງເປັນສະໂມສອນສະໝັກຫຼິ້ນ ຫຼື ລີກບານເຕະເຄິ່ງອາຊີບ (Semi-Pro League) ເຊິ່ງນັກກິລາບາງຈໍານວນກໍ່ເປັນນັກຮຽນ ຫຼື ທັງເຮັດວຽກໄປນໍາ ແລະ ເປັນນັກກິລາໄປນໍາ (Sanchez-Lopez et al., 2023). ລີກບານເຕະເຄິ່ງອາຊີບໃນລາວ ແມ່ນບາດກ້າວທີ່ສໍາຄັນຫຼາຍ ເພາະມັນເປັນຂົວຕໍ່ລະຫວ່າງ ບານເຕະສະໝັກຫຼິ້ນ ແລະ ບານເຕະອາຊີບ (Lao League 1) ທີ່ຊ່ວຍຂະຫຍາຍຖານນັກເຕະໃຫ້ກວ້າງຂຶ້ນ ແລະ ເປີດໂອກາດໃຫ້ທີມຈາກຕ່າງແຂວງໄດ້ມີສ່ວນຮ່ວມ. ການຈັດລີກເຄິ່ງອາຊີບໃນລາວມັກຈະປະເຊີນກັບບັນຫາ **"ການຖອນຕົວລະຫວ່າງລະດູການ"** ຍ້ອນງົບປະມານບໍ່ພຽງພໍ. ດັ່ງນັ້ນ, ສະຫະພັນບານເຕະແຫ່ງຊາດ (ສຕລ) ຕ້ອງມີກົດລະບຽບການເງິນທີ່ເຂັ້ມງວດ ແຕ່ກໍຕ້ອງມີເງິນລາງວັນທີ່ຄຸ້ມຄ່າເພື່ອເປັນແຮງຈູງໃຈ.

## 5. ສະຫຼຸບ

ອີງຕາມຜົນການສຶກສາ ແລະ ວິເຄາະຂໍ້ມູນກ່ຽວກັບສະພາບການພັດທະນາ ແລະ ການບໍລິຫານສະໂມສອນບານເຕະ ມະຫາວິທະຍາໄລສຸພານຸວົງ ເຫັນວ່າ ຕ້ອງເນັ້ນໃສ່ການປັບປຸງ ແລະ ພັດທະນາ ດ້ານມາດຕະຖານ ແລະ ຄວາມພຽງພໍຂອງອຸປະກອນ ເນື່ອງຈາກເປັນຂໍ້ທີ່ມີຄ່າສະເລ່ຍຕໍ່າສຸດ ເຊິ່ງຜູ້ບໍລິຫານຄວນພິຈາລະນາຈັດສັນງົບປະມານເພີ່ມເຕີມໃນການຈັດຊື້ອຸປະກອນຝຶກຊ້ອມໃຫ້ທັນສະໄໝ ແລະ ພຽງພໍກັບຈໍານວນຜູ້ຊົມໃຊ້ ໂດຍເນັ້ນໃສ່ອຸປະກອນທີ່ໄດ້ມາດຕະຖານສາກົນ ເພື່ອຍົກລະດັບຂີດຄວາມສາມາດຂອງນັກກິລາ. ນອກຈາກນີ້, ດ້ານການບໍລິຫານງົບປະມານ ຄວນມີການວາງແຜນການນໍາໃຊ້ງົບປະມານໃຫ້ມີຄວາມສົມດຸນລະຫວ່າງການຈັດການແຂ່ງຂັນ ແລະ ການບໍາລຸງຮັກສາສະຖານທີ່ທໍາການເຝິກຊ້ອມ ແລະ ການແຂ່ງຂັນ. ຄວນກໍານົດແຜນການສ້ອມແປງສະໜາມ ແລະ ອຸປະກອນ (Maintenance Plan) ຢ່າງເປັນລະບົບ ເພື່ອປ້ອງກັນການເປ່ເພໃນໄລຍະຍາວ. ດ້ານວິທະຍາສາດການກິລາ ແລະ ການແພດ ຄວນມີການສ້າງເຄືອຂ່າຍຮ່ວມມືກັບສະຖາບັນການແພດ ຫຼື ຊ່ຽວຊານດ້ານວິທະຍາສາດການກິລາ ເພື່ອເຂົ້າມາຊ່ວຍໃນການວາງແຜນການຝຶກຊ້ອມ ແລະ ການເບິ່ງແຍງສຸຂະພາບນັກກິລາໃຫ້ເປັນມືອາຊີບຫຼາຍຂຶ້ນ. ຄວນມີການສຶກສາແບບຄຸນນະພາບ (Qualitative Research) ໂດຍການສໍາພາດເຈາະເລິກນັກກິລາ ແລະ ຜູ້ຝຶກສອນ ເພື່ອໃຫ້ຊາບເຖິງບັນຫາທີ່ແທ້ຈິງຂອງການຂາດແຄນອຸປະກອນ ແລະ ຄວາມຕ້ອງການດ້ານງົບປະມານ. ຄວນສຶກສາປຽບທຽບສະພາບການບໍລິຫານ ລະຫວ່າງອົງກອນຂອງລັດ ແລະ ເອກະຊົນ ເພື່ອຊອກຫາຕົວແບບ (Best Practice) ທີ່ດີທີ່ສຸດໃນການພັດທະນາວິທະຍາສາດການກິລາໃນລາວ.

## 6. ຂໍ້ຂັດແຍ່ງ

ທີມງານພວກຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


ສະຫະພັນບານເຕະແຫ່ງຊາດລາວ. (2024). *ປະຫວັດຄວາມເປັນມາຂອງສະຫະພັນບານເຕະແຫ່ງຊາດລາວ.* https://laoff.org.la/history

Zhang, J. (2020). Problems and Prospects: A Study on the Development History of Chinese Football Industry. The International Journal of the History of Sport, 37(sup1):1-22.

Elias, N., & Dunning, E. (1986). *Quest for Excitement: Sport and Leisure in the Civilizing Process.* Blackwell.

Wood, K. (2017). Balls on walls, feet on streets: Subversive play in Grand Ducal Florence: Balls on Walls. *Renaissance Studies. 32*(3). 10.1111/rest.12314.

Kennedy, D. (2004). Locality and professional football club development: the demographics of football club support in late victorian Liverpool. *Soccer & Society*, *5*(3), 371–391. https://doi.org/10.1080/1466097042000279616

The Football Association. (2023). *The History of the FA*. TheFA.com. https://www.thefa.com/about-football-association/history

Dolles, H. & Soderman, S. (2015). *The network of value captures in football club management: A framework to develop and analyze competitive advantage in professional team sports.* Handbook of Research on Sport and Business.

Peerasak, W. (2023). Success in Football Management of Assumption College Thonburi. *Academic Journal of Thailand National Sports University.* Vol. 15, No. 2.

Yimthong , P., & Suksa-ard, P. . (2023). SUCCESS IN FOOTBALL MANAGEMENT OF ASSUMPTION COLLEGE THONBURI. *Academic Journal of Thailand National Sports University*, *15*(2), 107–118. retrieved from https://he02.tci-thaijo.org/index.php/TNSUJournal/article/view/252279

Poli, R., Ravenel, L. and Besson, R. (2015). Youth training in European football: A comparative analysis. *CIES Football Observatory Monthly Report*, Issue no. 9, 1-11. https://football-observatory.com/IMG/pdf/mr09_eng.pdf

Sisaart, B. (2002). Basic research. No. 7. Bangkok: Sowithiyasatha. SPSS software platform offers advanced statistical analysis

Yamane, T. (1973). *Statistics: An introductory analysis.*

Zijing, W. & Yinru, C. (2022). The Study on football club performance Management: A case study of the England Football Association. *ASEAN Journal of Sports for Development and Peace, 2*(1),

Chumjai, P. (2022). THE PLANNING MANAGEMENT PROCESS OF SPORT CENTER IN THAILAND UNIVERSITY. *Academic Journal of Thailand National Sports University*, *15*(1), 17–28. retrieved from https://he02.tci-thaijo.org/index.php/TNSUJournal/article/view/255792

Samur, S. (2018). Organization Design in Football Management Process. *International Journal of Human Movement and Sports Sciences 6*(2): 38-46. DOI: 10.13189/saj.2018.060203

Sanchez-Lopez, R. et al. (2023). Comparing semi-professional and amateur game contexts via Football Competence (Procedural Tactical Knowledge). Retsos, 47, 419-429.

Sánchez-López, R., Echeazarra, I. & Castellano, J. (2022). Comparing semi-professional and amateur game contexts via Football Competence (Procedural Tactical Knowledge). *Retos. 47.* 419-429. 10.47197/retos.v47.94576.

**ຕາຕະລາງ** 1. ສຳລັບເກນໃຫ້ຄະແນນຂອງຄວາມຄິດເຫັນ ສະພາບການພັດທະນາ ແລະ ການບໍລິຫານ ສະໂມສອນກິລາບານເຕະ ມະຫາວິທະຍາໄລ ສຸພານຸວົງ ແມ່ນໃຊ້ແບບສອບຖາມມາດຕາສ່ວນປະເມີນຄ່າ Rating Scale ໂດຍໄດ້ກຳນົດຄື:

| **ຄະແນນ** | **ຄະແນນສະເລ່ຍ** | **ຄວາມໝາຍ** |
|---|---|---|
| 5 | 4.50 - 5.00 | ດີຫຼາຍ |
| 4 | 3.50 - 4.49 | ດີ |
| 3 | 2.50 - 3.49 | ປານກາງ |
| 2 | 1.50 - 2.49 | ອ່ອນ |
| 1 | 1.00 - 1.49 | ອ່ອນຫຼາຍ |

**ຕາຕະລາງ** 2. ສະແດງເຖິງຈຳນວນ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ສະພາບການພັດທະນາ ແລະ ການບໍລິຫານ ສະໂມສອນກິລາບານເຕະ ມະຫາວິທະຍາໄລ ສຸພານຸວົງ

| **ລ/ດ** | **ສະພາບການພັດທະນາ ແລະ ການບໍລິຫານ** | **ຈຳນວນ** ($N$) | $\bar{X}$ | $S.D$ | **ຄ່າລະດັບ** |
|---|---|---|---|---|---|
| 1 | ໂຄງຮ່າງການຈັດຕັ້ງຢ່າງຄົບຖ້ວນ | 80 | 4.00 | 1.36 | ດີ |
| 2 | ການວາງແຜນຍຸດທະສາດພັດທະນາໃນອະນາຄົດ | 80 | 3.55 | 0.67 | ດີ |
| 3 | ການສະໜັບສະໜູນງົບປະມານຈາກພາກລັດ | 80 | 3.20 | 1.36 | ປານກາງ |
| 4 | ງົບປະມານໃນການສ້ອມແປງສະໜາມ ແລະ ອຸປະກອນ | 80 | 3.15 | 0.89 | ປານກາງ |
| 5 | ວິທະຍາສາດການກິລາ ແລະ ການແພດ | 80 | 3.15 | 1.06 | ປານກາງ |
| 6 | ບຸກຄະລາກອນ ແລະ ຄວາມມືອາຊີບຂອງຜູ້ບໍລິຫານ | 80 | 3.65 | 0.79 | ດີ |
| 7 | ມາດຕະຖານ ແລະ ຄວາມພຽງພໍຂອງອຸປະກອນຝຶກຊ້ອມ | 80 | 2.95 | 0.96 | ປານກາງ |
| 8 | ການສົ່ງເສີມນັກສຶກສາ ແລະ ການຈັດການແຂ່ງຂັນ | 80 | 3.80 | 0.92 | ດີ |
| 9 | ຍຸດທະສາດການແຂ່ງຂັນ ແລະ ການສ້າງຊື່ສຽງ | 80 | 3.70 | 0.71 | ດີ |
| | **ສະເລ່ຍລວມ** | **80** | **3.46** | **0.93** | **ປານກາງ** |